ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 280/ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 11 DEC 2014

ເຖິງ: ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ (ບໍລິສັດ ໂກນຊິຕີ ອິນເຕີເນັດ ຈໍາກັດ)

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສື ສະເໜີຂອງພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ ເລກທີ 2168/ອຄ.ນວ, ລົງວັນທີ 03 ທັນວາ 2014;
- ອີງຕາມ ບົດບັນທຶກກອງປະຊຸມ ຂອງກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ເລກທີ 342/ປກສ ນວ, ລົງວັນທີ 13 ພະຈິກ 2014;
- ອີງຕາມ ແຈ້ງການ ເລື່ອງການໂຈະການດໍາເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍແຈ້ງໃຫ້ ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ບໍລິສັດ ໂກນຊິຕີ ອິນເຕີເນັດ ຈໍາກັດ, ທະບຽນວິສາຫະກິດ ເລກທີ 274/ຈທວ, ລົງວັນທີ 18 ກໍລະກົດ 2014, ມີທີ່ຕັ້ງສໍານັກງານຕັ້ງຢູ່, ບ້ານ ໜອງດ້ວງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ໃນປະເພດທຸລະກິດຕາມທີ່ໄດ້ບົ່ງໄວ້ ໃນດ້ານຫຼັງໃບທະບຽນວິສາຫະກິດດັ່ງກ່າວ ຕາມເຫດຜົນບົດບັນທຶກກອງປະຊຸມ ເລກທີ 342/ປກສ ນວ, ລົງວັນທີ 13 ພະຈິກ 2014 (ໄດ້ຕິດຄັດມາພ້ອມນີ້);

2. ກໍານົດເວລາການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ: ເລີ່ມແຕ່ວັນທີ 11 ທັນວາ 2014 ເຖິງ ວັນທີ 11 ມັງກອນ 2015; ພາຍຫຼັງສິ້ນສຸດກໍານົດເວລາດັ່ງກ່າວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະອອກແຈ້ງການໂຈະການເຄື່ອນໄຫວທຸລະກິດຖາວອນ ເວັ້ນເສຍແຕ່ຈະມີໜັງສືຈາກພາກສ່ວນກ່ຽວຂ້ອງເປັນຢ່າງອື່ນ;

3. ໃນໄລຍະການໂຈະການດໍາເນີນທຸລະກິດຊົ່ວຄາວນີ້:

3.1 ຫ້າມວິສາຫະກິດດັ່ງກ່າວ ເຄື່ອນໄຫວດໍາເນີນທຸລະກິດຢ່າງເດັດຂາດ;

3.2 ຕ້ອງນໍາເອົາໃບທະບຽນວິສາຫະກິດ (ຕົ້ນສະບັບ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເກັບຮັກສາໄວ້;

3.3 ກໍລະນີລະເມີດ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຈາກການເຄື່ອນໄຫວຂອງຕົນທັງໝົດ ແລະ ຈະຖືກປະຕິບັດມາດຕະການຕາມມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ໃຫ້ຍຸບເລີກຕາມຂັ້ນຕອນຂອງລະບຽບ ກົດໝາຍ.

ແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເຈົ້າໜ້າທີ່ ທະບຽນວິສາຫະກິດ

ພູວົງ ສີຫອມວົງ

ບ່ອນສົ່ງ

- ຫ້ອງວ່າການສັດຖະບານ 1 ສະບັບ;
- ກະຊວງ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ 1 ສະບັບ;
- ບໍລິສັດ ໂກນຊີຕີ ອິນເຕີເນັດ ຈຳກັດ 1 ສະບັບ;
- ກົມສອບສວນອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ພະແນກ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ 1 ສະບັບ;
- ສຳເນົາ 1 ສະບັບ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ພະແນກຄຸ້ມຄອງການເຄື່ອນໄຫວວິສາຫະກິດ
ໂທລະສັບ 021 412011